ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

PCD

ເລກທີ 238 /ພກພ
ນະຄອນຫຼວງວຽງຈັນ, ວັນທີ 18 JUN 2025

ໜັງສືແຈ້ງການ

ຮຽນ: ບັນດາຜູ້ຖືຮຸ້ນ ຂອງບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ທີ່ເຄົາລົບ ແລະ ນັບຖື.

ເລື່ອງ: ແຈ້ງຜົນສຳເລັດການປ່ຽນແປງມູນຄ່າກຳນົດຮຸ້ນຂອງ ພກພ

- ອີງຕາມ ໜັງສືແຈ້ງການການຈາກ ຕລຊລ ສະບັບເລກທີ: 871/ຕລຊລ ລົງວັນທີ: 17 ມິຖຸນາ 2025

ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດຮຽນມາຍັງບັນດາທ່ານຜູ້ຖືຮຸ້ນ ຂອງ ພກພ ຊາບວ່າການປ່ຽນແປງມູນຄ່າກຳນົດຮຸ້ນ ຂອງ ພກພ ແມ່ນໄດ້ສຳເລັດແລ້ວຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນລະບຽບທີ່ກ່ຽວຂ້ອງ ແລະ ໄດ້ມີການເປີດການ ຊື້-ຂາຍ ຮຸ້ນ ພກພ ປົກກະຕິ ແຕ່ວັນທີ 16 ມິຖຸນາ 2025 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ.

ຜູ້ອຳນວຍການໃຫຍ່

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ບໍລິສັດ
ພຸສີກໍ່ສ້າງ ແລະ ພັດທະນາ
ມະຫາຊົນ
Phousy Construction and Development Public Company
ນະຄອນ ຫຼວງ ວຽງຈັນ

ແພງ ດວງເງິນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຕລຊລ
ຕະຫຼາດຫຼັກຊັບລາວ
LAO SECURITIES EXCHANGE

ເລກທີ 871 /ຕລຊລ

ນະຄອນຫຼວງວຽງຈັນ, ວັນທີ 17 JUN 2025

ແຈ້ງການ

ເຖິງ: ທ່ານຜູ້ອຳນວຍການໃຫຍ່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ,

ເລື່ອງ: ແຈ້ງຜົນສຳເລັດການປ່ຽນແປງມູນຄ່າກຳນົດຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ).

- ອີງຕາມ ແຈ້ງການຂັ້ນຕອນປະຕິບັດກ່ຽວກັບການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ (ສະບັບປັບປຸງ), ເລກທີ 382/ຕລຊລ, ລົງວັນທີ 26 ມີນາ 2025;
- ອີງຕາມ ໜັງສືແຈ້ງຜົນການທົບທວນເອກະສານກ່ຽວກັບການປ່ຽນແປງມູນຄ່າກຳນົດ, ເລກທີ 769/ຕລຊລ, ລົງວັນທີ 27 ພຶດສະພາ 2025;
- ອີງຕາມ ໜັງສືແຈ້ງການເພີ່ມເຕີມກ່ຽວກັບການດຳເນີນການປ່ຽນແປງມູນຄ່າກຳນົດ, ເລກທີ 865/ຕລຊລ, ລົງວັນທີ 11 ມິຖຸນາ 2025.

ຕະຫຼາດຫຼັກຊັບລາວ (ຕລຊລ) ຂໍຖືເປັນກຽດຮຽນ ແຈ້ງມາຍັງທ່ານຊາບວ່າ ຕລຊລ ໄດ້ສຳເລັດການປ່ຽນແປງມູນຄ່າກຳນົດຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນລະບຽບທີ່ກ່ຽວຂ້ອງ ໂດຍຮຸ້ນຂອງ ພກພ ແມ່ນສາມາດແລກປ່ຽນຊື້ ຂາຍໃນລະບົບ ໂດຍມີມູນຄ່າກຳນົດໃໝ່ ນັບຕັ້ງແຕ່ວັນທີ 16 ມິຖຸນາ 2025 ເປັນຕົ້ນໄປ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

ລາຍການ Item	ລາຍລະອຽດ Detail
ມູນຄ່າກຳນົດ (ກີບ/ຮຸ້ນ) Par Value (LAK/Share)	200
ຈຳນວນຮຸ້ນທັງໝົດ (ຮຸ້ນ) Total Share (Shares)	2,910,000,000
ລາຄາຖານໃໝ່ (ກີບ/ຮຸ້ນ) ວັນທີ 16/06/2025 New Base Price (LAK/Share) Date: 16/06/2025	820
ມູນຄ່າຕະຫຼາດໃໝ່ (ກີບ) ວັນທີ 16/06/2025 New Market Capitalization (LAK) Date: 16/06/2025	2,386,200,000,000

ດັ່ງນັ້ນ, ຕລຊລ ຈຶ່ງຮຽນແຈ້ງມາຍັງທ່ານເພື່ອຊາບ.

ຜູ້ອຳນວຍການໃຫຍ່

ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ Lao Securities Exchange Co.,Ltd

ສຸວັນສະຫວາດ ທິລະມຸນ

ຜູ້ປະສານງານ:
ນ. ສຸປິດາ ພະລາງວັນ, ເບີໂທ 020 5508 2424
ນ. ພອນທິບ ສຸກວິໄຊ, ເບີໂທ 020 5530 2459